ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ccccccccccccccccccccccccccccccccccccccccccccccccccccc

ກະຊວງ ກະສິກຳ ແລະ ປ່າໄມ້

ຫ້ອງການ

ເລກທີ 0227/ຫກ

ນະຄອນຫຼວງວຽງຈັນ, 03 FEB 2014

## ແຈ້ງການແນະນຳ

**ຮຽນ:** ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.

**ເລື່ອງ:** ຂໍ້ກຳນົດເງື່ອນໄຂການສົ່ງອອກໃບຢາສູບແຫ້ງ (dried tobacco leaf, *Nicotiana tabacum*) ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ.

- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມ ດຳລັດ ແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;
- ອີງຕາມ ປະກາດຂອງກົມວິຊາການກະເສດຂອງ ຣາຊະອານາຈັກໄທ ພສ 2556, ລົງວັນທີ 11/12/2013
- ອີງຕາມການສະເໜີຂອງກົມປູກຝັງສະບັບເລກທີ 0035/ກປຝ, ລົງວັນທີ 13/01/2014.

ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ: ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ສົ່ງອອກໃບຢາສູບແຫ້ງ ແລະ ຜູ້ດຳເນີນທຸລະກິດດ້ານສຸຂານາໄມພືດຫຼີກເວັ້ນຜົນກະທົບດ້ານລົບຕໍ່ສິນຄ້າກະສິກຳສົ່ງອອກ ຂອງ ສປປ ລາວ ໄປຕ່າງປະເທດ ພ້ອມທັງຮັບປະກັນການປະຕິບັດລະບຽບການດ້ານສຸຂານາໄມພືດສາກົນ ແລະ ປະເທດປາຍທາງນັ້ນ, ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ຈິ່ງອອກແຈ້ງການ ດັ່ງນີ້:

ກ່ອນສົ່ງອອກ ໃບຢາສູບແຫ້ງ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ ຜູ້ສົ່ງອອກຕ້ອງປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

**1. ການຂໍອະນຸຍາດນຳເຂົ້າ**

- ຕ້ອງມີໃບອະນຸຍາດນຳເຂົ້າ ເຊິ່ງອອກໃຫ້ໂດຍກົມວິຊາການກະເສດຂອງປະເທດໄທ.

**2. ວິທີການຂົນສົ່ງ**

- ຕ້ອງສົ່ງຢາສູບມາຈາກພື້ນທີ່ໃດໜຶ່ງຂອງ ສປປ ລາວ ໄປຍັງຣາຊະອານາຈັກໄທໃນລັກສະນະເປັນສິນຄ້າຂົນສົ່ງທາງບົກ.

**3. ຂໍ້ກຳນົດເງື່ອນໄຂສຳລັບການນຳເຂົ້າ**

- ຕ້ອງປາສະຈາກສັດຕູພືດກັກກັນຂອງຢາສູບ 2 ຊະນິດຄື: Ascochyta blight of cotton *(Ascochyta gossypii) ແລະ* Verticillium wilt of lucerne (*Verticillium albo-atrum);*

- ຕ້ອງປາສະຈາກແມງໄມ້ທີ່ມີຊີວິດ ຫຼື ສິ່ງທີ່ມີຊີວິດອື່ນທີ່ມີຄວາມສາມາດເປັນສັດຕູພືດກັກກັນຂອງ ຣາຊະອານາຈັກໄທ ແລະ ບໍ່ມີການປົນເປື້ອນຂອງດິນ, ຊາຍ ແລະ ຊິ້ນສ່ວນຂອງພືດອື່ນ ຫຼື ສິ່ງອື່ນໃດທີ່ມີຄວາມສາມາດນຳພາສັດຕູພືດກັກກັນໄດ້;
- ຕ້ອງມັດ ຫຼື ບັນຈຸຫີບຫໍ່ຢາສູບໃນພາສະນະບັນຈຸທີ່ໃໝ່ ແລະ ສະອາດ;
- ຕ້ອງທຳຄວາມສະອາດລົດບັນທຸກໃຫ້ປາສະຈາກດິນ, ຊາຍ ແລະ ສ່ວນຂອງພືດອື່ນ ຫຼື ສິ່ງອື່ນໃດທີ່ສາມາດນຳພາສັດຕູພືດກັກກັນໄດ້ ກ່ອນດຳເນີນການຂົນຍ້າຍຢາສູບຂຶ້ນພາຫະນະຂົນສົ່ງ ນອກຈາກນີ້, ຕ້ອງປົກຄຸມລົດບັນທຸກໃຫ້ດີເພື່ອໃຫ້ໝັ້ນໃຈວ່າສາມາດປ້ອງກັນບໍ່ໃຫ້ຢາສູບຕົກເຮ່ຍໃນເວລາຂົນສົ່ງ;
- ຕ້ອງມີໜັງສືຮັບຮອງຈາກໜ່ວຍງານທີ່ກ່ຽວຂ້ອງ ຫຼື ເອກະຊົນວ່າໃບຢາສູບແຫ້ງທີ່ນຳເຂົ້າບໍ່ແມ່ນພືດທີ່ໄດ້ຮັບການຕັດແຕ່ງທາງພັນທຸກຳ.

4. ການຢັ້ງຢືນສຸຂານາໄມພືດ

- ຕ້ອງມີໃບຢັ້ງຢືນສຸຂານາໄມພືດຕົ້ນສະບັບເຊິ່ງອອກໃຫ້ໂດຍເຈົ້າໜ້າທີ່ທີ່ໄດ້ຮັບການແຕ່ງຕັ້ງຈາກອົງການຄຸ້ມຄອງວຽກງານປ້ອງກັນພືດ (ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້) ຕິດໄປພ້ອມກັບຊຸດສິນຄ້າໃນທຸກໆຄັ້ງທີ່ສົ່ງສິນຄ້າໄປປະເທດໄທ;
- ໃບຢັ້ງຢືນສຸຂານາໄມພືດຕ້ອງລະບຸຂໍ້ຄວາມເພີ່ມຕື່ມດັ່ງລຸ່ມນີ້:

"The consignment of dried tobacco leaves was inspected and found free from *Ascochyta gossypii and Verticillium albo-atrum*"

5. ການກວດກາການນຳເຂົ້າຂອງໄທ
- ເມື່ອຢາສູບມາເຖິງດ່ານນຳເຂົ້າຂອງຣາຊະອານາຈັກໄທແລ້ວ ການກວດກາຢາສູບຈະດຳເນີນຫຼັງຈາກໄດ້ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານທັງໝົດທີ່ຄັດຕິດມາກັບສິນຄ້າ;
- ພະນັກງານກັກກັນພືດຈະສຸ່ມຕົວຢ່າງຢາສູບ ແລະ ກວດສອບສັດຕູພືດ ຖ້າພົບສັດຕູພືດທີ່ມີຊີວິດຈະສົ່ງຕົວຢ່າງສັດຕູພືດໄປຍັງຫ້ອງວິໄຈເພື່ອຈຳແນກຊະນິດ ແລະ ຕ້ອງກັກຢາສູບໄວ້ຈົນກວ່າຈະຮູ້ຜົນຈາກຫ້ອງວິໄຈ;
- ໃນກໍລະນີກວດພົບສັດຕູພືດກັກກັນທັງ 2 ຊະນິດນັ້ນ ຫຼື ພົບສິ່ງອື່ນທີ່ສາມາດເປັນສັດຕູພືດກັກກັນຂອງຣາຊະອານາຈັກໄທ ຢາສູບທັງໝົດຕ້ອງຖືກກຳຈັດສັດຕູພືດດ້ວຍວິທີທີ່ເໝາະສົມ (ຖ້າມີວິທີການກຳຈັດ) ຫຼືສົ່ງກັບຫຼືທຳລາຍໂດຍຜູ້ປະກອບການຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ;
- ກົມວິຊາການກະເສດຂອງຣາຊະອານາຈັກໄທມີສິດໂຈະການນຳເຂົ້າຢາສູບຈາກ ສປປ ລາວ ເປັນການຊົ່ວຄາວຈົນກວ່າການປະເມີນຄວາມສ່ຽງສັດຕູພືດທີ່ກວດພົບນັ້ນຈະດຳເນີນການສຳເລັດ.

6. ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ສ້າງຄວາມຮັບຮູ້ໃຫ້ແກ່ສັງຄົມ

ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ທີ່ມີດ່ານປ້ອງກັນພືດຊາຍແດນທີ່ຕິດກັບປະເທດໄທ ຕ້ອງເຜີຍແຜ່ຂໍ້ມູນຂ່າວສານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຮັບຊາບເປັນຕົ້ນ ຜູ້ຜະລິດ, ຜູ້ປະກອບການ ແລະ ເຈົ້າໜ້າທີ່ຂະແໜງການຕ່າງໆ ປະຈຳດ່ານຊາຍແດນເຂົ້າ-ອອກ ກ່ຽວກັບສັດຕູພືດຕິດແປດກັບຢາສູບ ທີ່ເປັນເປົ້າໝາຍກວດກາ, ເງື່ອນໄຂການອະນຸຍາດນຳເຂົ້າຂອງປະເທດປາຍທາງ, ຂັ້ນຕອນການອະນຸຍາດ ນຳເຂົ້າ-ສົ່ງອອກ ແລະ ການແຈ້ງເອກະສານຢູ່ດ່ານ

ປ້ອງກັນພືດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກໃບຢາສູບແຫ້ງ ຈາກ ສປປ ລາວ ໄປຍັງຣາຊະອານາຈັກໄທໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການກັກກັນພືດຂອງປະເທດປາຍທາງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນກ່ຽວຂ້ອງເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

ຫົວໜ້າຫ້ອງການກະຊວງກະສິກຳ ແລະ ປ່າໄມ້

ຄຳພັນ ເຫຼືອນສິດທິດາ

ບ່ອນນຳສົ່ງ:

- ລັດຖະມົນຕີວ່າການກະຊວງ ກ.ປ. — 01 ສະບັບ (ເພື່ອຊາບແລະໃຊ້ຕາງລາຍງານ)
- ລັດຖະມົນຕີຊ່ວຍວ່າການກະຊວງ ກ.ປ, ທ່ານລະ — 01 ສະບັບ (ເພື່ອຊາບແລະໃຊ້ຕາງລາຍງານ)
- ຫ້ອງການກະຊວງອຸດສາຫະກຳແລະການຄ້າ — 01 ສະບັບ (ເພື່ອລາຍງານ)
- ຫ້ອງການກະຊວງການເງິນ (ກົມພາສີ) — 01 ສະບັບ (ເພື່ອລາຍງານ)
- ບັນດາກົມອ້ອມຂ້າງກະຊວງກ.ປ. — 01 ສະບັບ
- ກົມຄຸ້ມຄອງການນຳເຂົ້າ-ສົ່ງອອກ, ກະຊວງອ.ຄ — 01 ສະບັບ
- ກົມສົ່ງເສີມພັດທະນາສິນຄ້າ, ກະຊວງອ.ຄ — 01 ສະບັບ
- ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອ.ຄ — 01 ສະບັບ
- ເກັບມ້ຽນ — 01 ສະບັບ